DEVELOPMENTAL DISABILITIES ADMINISTRATION (DDA)

# ການແຈ້ງການຂອງການທວນຄືນເບິ່ງເງື່ອນໄຂຮັບເອົາການຊ່ວຍເຫລືອ
# Notification of Eligibility Review

ວັນທີ:

ຊື່ ແລະ ທີ່ຢູ່ຂອງລູກຄ້າ

ຊື່ ແລະ ທີ່ຢູ່ຂອງຜູ້ຕາງໜ້າຂອງລູກຄ້າ

ກ່ຽວກັບ: **ໃບແຈ້ງການຂອງການທວນຄືນກວດເບິ່ງເງື່ອນໄຂຮັບເອົາການຊ່ວຍເຫລືອສຳລັບ** ______________________

ທ່ານກຳລັງເປັນລູກຄ້າຂອງກົມ Developmental Disabilities Administration (DDA) ໃນປັດຈຸບັນນີ້.ກົດຣະບຽບຂອງເງື່ອນໄຂຮັບເອົາຂອງ DDA ຕ້ອງມີການກວດເບິ່ງເງື່ອນໄຂຮັບເອົາຄືນໃນຊ່ວງເວລາຫລາຍໆເທື່ອ.ພວກເຮົາຕ້ອງການຣາຍຣະອຽດເພີ້ມເຕີມເພື່ອຈະດຳເນີນເງື່ອນໄຂຮັບເອົາຂອງທ່ານສຳລັບ DDA ພາຍໄຕ້ເງື່ອນໄຂຕໍ່ລົງໄປນີ້ແນວນຶ່ງ: ຄວາມເສັຽອົງຄະດ້ານມັນສະມອງ, ສະມອງພິການ, ໂຣກລົມບ້າຫມູ, ໂຣກລະເມີເພີ້ຝັນ, ຫລື ໂຣກປະສາດແນວອື່ນ ຫລື ສະພາບແນວອື່ນທີ່ຄ້າຍຄືກັນກັບຄວາມເສັຽອົງຄະດ້ານມັນສະມອງ. ຂ້ອຍໄດ້ຄັດຕາຕະຣາງຂອງເອກະສານບັນທຶກທີ່ຈຳເປັນຕ້ອງມີມານຳເພື່ອໃຫ້ທ່ານຮູ້ຈັກວ່າຣາຍຣະອຽດແນວໃດແດ່ທີ່ຈະຕ້ອງການ.

## ທ່ານຕ້ອງໄດ້ເຮັດແນວໃດແດ່?

ພະແນກ DDA ຈະຍິນດີທີ່ຈະສົ່ງໄປເອົາຣາຍລະອຽດທີ່ຕ້ອງການໄປໃຫ້ສຳລັບການພິຈາຣະນາຄືນອັນນີ້. ຖ້າທ່ານຕ້ອງການຢາກໃຫ້ພະແນກ DDA ທີ່ຈະສົ່ງໄປເອົາຣາຍລະອຽດອັນນີ້, ກະຣຸນາຂຽນປະກອບໃບອະນຸຍາດທີ່ຖືກຄັດມານຳຕາມຕໍ່ລົງໄປນີ້:

1. ຫມາຍບອກຢູ່ໃນໃບອະນຸຍາດວ່າສະຖານທີ່ໃດ, ບ່ອນໃຫ້ການບໍຣິການບ່ອນໃດ ແລະ ສະຖາບັນບ່ອນໃດ ທີ່ພວກເຮົາຈະຮ້ອງຂໍເອົາຣາຍຣະອຽດມາໄດລວມທັງຣາຍຣະອຽດຂອງການຕິດຕໍ່ຫາ;
2. ເຊັນຊື່ໃສ່ໃບອະນຸຍາດທີ່ຖືກຄັດມານຳ, ແລະ
3. ສົ່ງໃບຟອມກັບຄືນຫາພະແນກ DDA ໃສ່ໃນຊອງເປົ່າຈ່າຫນ້າຊອງແລ້ວທີ່ສອດມານຳ.

## ແມ່ນຫຍັງຈະເກີດຂຶ້ນຖ້າຫາກວ່າຂ້າພະເຈົ້າບໍ່ຕອບຄືນມາຕໍ່ຄຳຮ້ອງຂໍອັນນີ້?

ຖ້າພວກເຮົາບໍ່ໄດ້ຍິນຂ່າວຈາກທ່ານກ່ອນວັນທີນີ້, ພວກເຮົາຈະທຳການພິຈາຣະນາເບິ່ງເງື່ອນໄຂຮັບເອົາຂອງທ່ານໂດຍການໃຊ້ຣາຍລະອຽດທີ່ພວກເຮົາມີຢູ່ໃນຊຸດເອກສານລູກຄ້າຂອງທ່ານ.ຖ້າຫາກວ່າບໍ່ມີຣາຍຣະອຽດພຽງພໍເພື່ອຈະຢືນຢັນຄຳຕັດສິນໃນເງື່ອນໄຂຮັບເອົາ, ແລ້ວເງື່ອນໄຂຮັບເອົາສຳລັບ DDA ຂອງທ່ານຈະຖືກຕັດ.

ກະຣຸນາຕອບມາໄວເທົ່າທີ່ຈະໄວໄດ້ ເພື່ອຈະຫລີກເວັ້ນການຢຸດສະງັກໃນການບໍຣິການ, ແຕ່ບໍ່ໃຫ້ກາຍເກີນວັນທີ ______________________. ຖ້າຫາກວ່າພວກເຮົາບໍ່ໄດ້ຍິນຂ່າວຈາກທ່ານກ່ອນວັນທີນີ້, ພວກເຮົາຈະທຳການພິຈາຣະນາເບິ່ງເງື່ອນໄຂຮັບເອົາໂດຍອີງໃສ່ຣາຍລະອຽດທີ່ມີຢູ່ໃນຊຸດເອກະສານຂອງທ່ານ.

ຖ້າຫາກວ່າທ່ານມີຄຳຖາມແນວໃດໃຫ້ຕິດຕໍ່ໄປຫາ:

| ຊື່ | ເລກໂທຣະສັບ | ທີ່ຢູ່ອີແມລ໌ |
|---|---|---|

ໃບໂກປີ້ຂອງກົດໝາຍຕ່າງໆຂອງຣັດທີ່ຄຸ້ມຄອງເງື່ອນໄຂຮັບເອົາ (WAC 388-823) ແມ່ນມີໄວ້ໃຫ້ຕາມການຮ້ອງຂໍຫລືທາງອອນລາຍນ໌ທີ່ https://www.dshs.wa.gov/dda/consumers-and-families/eligibility.

ສອດມານຳ: ຕາຕະຣາງຂອງເອກະສານບັນທຶກທີ່ຈຳເປັນຕ້ອງມີ
ໃບຟອມອະນຸຍາດ (DSHS 14-012)

cc: ສຳນວນເອກສານຂອງລູກຄ້າ

## ຕາຕະລາງຂອງເອກສານບັນທຶກທີ່ຈຳເປັນຕ້ອງມີ

| ສະພາບຂອງຄວາມເສັຽອົງຄະ | ການວິຈັຍໂຣກ | ຜູ້ວິຈັຍໂຣກ | ບັນທຶກອື່ນໆ |
|---|---|---|---|
| ຄວາມເສັຽອົງຄະດ້ານມັນສະມອງ<br>(Intellectual Disability) | ຄວາມເສັຽອົງຄະດ້ານມັນສະມອງ | ທ່ານໝໍຈິດວິທະຍາທີ່ມີໃບປະກາດ, ທ່ານໝໍຈິດວິທະຍາທີ່ໂຮງຮຽນຢັ້ງຢືນໃນວໍຊິງຕັນຫລື ທ່ານໝໍຈິດວິທະຍາທີ່ມີໃບປະກາດຈາກໂຮງຮຽນອື່ນທີ່ຖືກຢັ້ງຢືນໂດຍສະມາຄົມຂອງໂຮງຮຽນທ່ານຫມໍຈິດວິທະຍາແຫ່ງຊາດ | ໃບລາຍງານໂຣກຈິດຄົບຖ້ວນລວມທັງຄະແນນ Full Scale IQ ຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດ, ແລະ ຄະແນນການສອບເບິ່ງຄວາມຊຳນານໃນການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດທີ່ໄດ້ເຮັດພາຍໃນ 36 ເດືອນຜ່ານມາ. |
| ສະມອງພິການ<br>(Cerebral Palsy) | ໂຣກສະມອງພິການ<br>(Cerebral Palsy)<br>ພາວະແຂນຂາອຳມະພາດ<br>(Quadriplegia)<br>ອຳມະພາດເຄິ່ງສ່ວນ (Hemiplegia)<br>ອຳມະພາດສ່ວນດຽວ (Diplegia) | ທ່ານໝໍທີ່ມີໃບປະກາດ | ອາການກ່ອນອາຍຸ 3 ປີ, ແລະ ຣາຍຣະອຽດທີ່ອູ້ມຊູຄວາມຕ້ອງການສຳລັບຄວາມຊ່ວຍເຫລືອທາງຮ່າງກາຍໂດຍກິງປະຈຳວັນໃນສອງຈຳພວກ ຫລື ຫລາຍກວ່າ (ການເຂົ້າຫ້ອງນ້ຳ, ການອາບນ້ຳ, ການກິນອາຫານ, ການນຸ່ງເຄື່ອງ, ການເຄື່ອນໄຫວໄປມາ, ຫລື ການສື່ສານຕິດຕໍ່) . |
| ໂຣກລົມບ້າຫມູ<br>(Epilepsy) | ໂຣກລົມບ້າໝູ<br>ຫລື<br>ໂຣກຊັກດິ້ນ | ທ່ານຫມໍໂຣກປະສາດທີ່ຖືກຢັ້ງຢືນໂດຍຄະນະກັມມະການ | ການວິຈັຍໂຣກທີ່ຖືກອີງໃສ່ປະວັດການພະຍາບານ ແລະ ການກວດເບິ່ງໂຣກປະສາດ, ການຢັ້ງຢືນຈາກທ່ານຫມໍ ຫລື ທ່ານຫມໍໂຣກຈິດກ່ຽວກັບການຊັກບ້າຫມູທີ່ຄວບຄຸມບໍ່ໄດ້ ແລະ ເກີດຂື້ນຕະລອດມາ ຫລື ເກີດຂື້ນເປັນປະຈຳ, ແລະ ການກວດເບິ່ງຄວາມຊຳນານໃນການປັບຕົວຊຶ່ງສະແດງໃຫ້ເຫັນການມີຂອບເຂດຈຳກັດຮ້າຍແຮງໃນການທຳງານການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດ. |
| ໂຣກລະເມີເພີ້ຝັນ<br>(Autism)<br>(per DSM-IV-TR) | ໂຣກລະເມີເພີ້ຝັນຫລື<br>ພະຍາດທີ່ຄືລະເມີເພີ້ຝັນ<br>(Autism ຫລື Autistic Disorder)<br>Per 299.00 in DSM-IV-TR | ທ່ານໝໍຈິດວິທະຍາທີ່ມີໃບປະກາດ, ຜູ້ຝຶກຫັດນາຍຫມໍລົງທະບຽນທີ່ກ້າວຫນ້າ ARNP ທີ່ພົວພັນນຳໂຣກລະເມີເພີ້ຝັນ ຫລື ສູນກາງພັດທະນາ ຫລື ຄະນະກັມມະການຢັ້ງຢືນ: ທ່ານຫມໍໂຣກປະສາດ, ທ່ານຫມໍໂຣກຈິດ, ຫລື ທ່ານຫມໍປິ່ນປົວເດັກເຣື່ອງການເຕີບໂຕ ແລະ ການປະພຶດ | ການຕີຣາຄາປະເມີນຜົນຄົບຖ້ວນ per DSM-IV-TR ທີ່ສອດຄ່ອງນຳກົດເກນຂອງການກວດວິຈັຍທຸກໆຢ່າງ, ຫລັກຖານຂອງການຊັກຊ້າ ຫລື ການທຳງານທີ່ຜິດປົກກະຕິກ່ອນອາຍຸຫ້າ (5) ປີ ໃນຄວາມຊຳນານທາງສັງຄົມ, ພາສາ, ການຕິດຕໍ່ສື່ສານ ຫລື ການຫລິ້ນທີ່ເປັນສັນຍາລັກ ຫລື ການວາດພາບ, ແລະ ການກວດເບິ່ງຄວາມຊຳນານໃນການປັບຕົວຊຶ່ງສະແດງໃຫ້ເຫັນການມີຂອບເຂດຈຳກັດຮ້າຍແຮງໃນການທຳງານການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດ. |
| ໂຣກລະເມີເພີ້ຝັນໄປທົ່ວທິບ<br>(Autism Spectrum Disorder)<br>(per DSM-5) | ໂຣກລະເມີເພີ້ຝັນໄປທົ່ວທິບ<br>(Autism Spectrum Disorder<br>299.00<br>Per DSM-5 | ທ່ານໝໍຈິດວິທະຍາທີ່ມີໃບປະກາດ, ຜູ້ຝຶກຫັດນາຍຫມໍລົງທະບຽນທີ່ກ້າວຫນ້າ ARNP ທີ່ພົວພັນນຳໂຣກລະເມີເພີ້ຝັນ ຫລື ສູນກາງພັດທະນາ ຫລື ຄະນະກັມມະການຢັ້ງຢືນ: ທ່ານຫມໍໂຣກປະສາດ, ທ່ານຫມໍໂຣກຈິດ, ຫລື ທ່ານຫມໍປິ່ນປົວເດັກເຣື່ອງການເຕີບໂຕ ແລະ ການປະພຶດ | ການຕີຣາຄາປະເມີນຜົນຄົບຖ້ວນ per DSM-V ທີ່ສອດຄ່ອງນຳກົດເກນຂອງການກວດວິຈັຍທຸກໆຢ່າງ, ຫລັກຖານຂອງການຊັກຊ້າ ຫລື ການທຳງານທີ່ຜິດປົກກະຕິກ່ອນອາຍຸຫ້າ (5) ປີ ໃນຄວາມຊຳນານທາງການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດ,ແລະ FSIQ ຂອງການແຕກຕ່າງຈາກມາດຕະຖານອັນນຶ່ງ ຫລື ຫລາຍກວ່ານັ້ນທີ່ຕ່ຳກວ່າກຳນົດ |
| ໂຣກປະສາດແນວອື່ນ ຫລື ສະພາບແນວອື່ນທີ່ຄ້າຍຄືກັນກັບຄວາມເສັຽອົງຄະດ້ານມັນສະມອງ | ຄວາມຜິດປົກກະຕິທາງໂຣກປະສາດ ຫລື ກັມມະພັນເປັນທີ່ຮູ້ຈັກວ່າກໍ່ໃຫ້ເກີດມີຄວາມຂາດເຂີນໃນຄວາມຊຳນານທາງແນວຄິດ ແລະ ການປັບຕົວ | ທ່ານໝໍທີ່ມີໃບປະກາດ | ຄະແນນ Full Scale IQ ຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າ 1.5 ຢ່າງຕ່ຳກວ່າກຳນົດ, ແລະ ຄະແນນການສອບເບິ່ງຄວາມຊຳນານໃນການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕ່ຳກວ່າກຳນົດທີ່ໄດ້ເຮັດພາຍໃນ 36 ເດືອນຜ່ານມາ. |

**ຫມາຍເຫດ: ໃບຟອມໃບນີ້ແມ່ນການຊີ້ນຳທົ່ວໄປເທົ່ານັ້ນ ແລະ DDA ອາດຈະຕ້ອງການຣາຍຣະອຽດ ຫລື ການຕີຣາຄາປະເມີນຜົນເພີ້ມເຕີມອີກ. ເອກສານບັນທຶກອັນນີ້ເປັນບາດກ້າວທຳອິດໃນການພິຈາຣະນາເບິ່ງເງື່ອນໄຂໄດ້ຮັບ. ເງື່ອນໄຂໄດ້ຮັບຂອງ DDA ຈະຖືກພິຈາຣະນາເບິ່ງໂດຍອີງຕາມກົດຫມາຍ WAC Chapter 388-823.**